Estampes et Poésies Laos
2003

# RENCONTRES ການພົບພໍ້ກັນ

ພາບແກະພິມ ແລະ ບົດກະວີລາວ
2003

Ce livre est à la croisée de travaux et de rencontres entre artistes, étudiants et poètes laotiens et français.

Au cours d'un atelier de trois mois à l'Institut National des Beaux Arts de Vientiane, de jeunes artistes ont découvert la gravure et l'estampe avec Marie-Paule Lesage.

Cet ouvrage présente le fruit de leurs travaux et leurs recherches créatives sur les textes de dix jeunes poètes laotiens, traduits au cours d'un atelier de traduction guidé par Pascal Poyet au Centre Culturel et de Coopération Linguistique, avec des élèves du département de français de l'Université Nationale du Laos.

Jean-André Viala

**Collaboration** :
Université Nationale du Laos, Département de français
Institut National des Beaux Arts de Vientiane
Centre Européen d'Actions Artistiques Contemporaines
Ville de Strasbourg
Centre Culturel et de Coopération Linguistique

**Agitateurs** :
Marie-Paule Lesage, artiste
Pascal Poyet, poète

| ນັກແກະສະຫຼັກ | GRAVEURS |
|---|---|
| ບົວວອນ ພົມມະບຸດ | Bouavone PHOMMABOUTH |
| ເດດສະຫວັນ ອິນທິສານ | Dethsavan INTHISAN |
| ໄຊສົມພານ ເພັດບົວລະພາ | Xaysomphane PHETBOUALAPHA |
| ວົງສະຫັວນ ດຳລົງສຸກ | Vongsavanh DAMLONGSOUK |
| ຄຳເພັດ ໄພທູນ | Khamphet PHAITHOUNE |
| ຄຳຂຽນ ເພັງພະຈັນ | Khamkhiene PHENGPHACHANH |
| ກົງພັດ ຫຼວງລາດ | Kongphat LOUANGRATH |
| ໄກສອນ ລຸນຍະເສນ | Kaysone LOUNNHASENE |
| ສັງຄົມ ສີວິໄລ | Sangkhom SIVILAY |

Remerciements, ຂອບໃຈມາຍັງ:

M. Pethsamone Kounsavath, UNL ; Mme Oraphine Maharaj, UNL ; M. Bouthieng Siriphaphanh, ENBA ; Mme Douangdeuane Bounyavong ; M. Othong Kham Insou ; M. Gilles Lainé, CCCL ; Mme Marie-Hélène Bastianelli, COBIAC ; Mlle Gabrièle Kwiatkowski, VdS ; Mme Evelyne Loux & Mme Ann Arend, CEAAC ; Mlle Karine Amarine.

## ນັກກະວີ

## POETES

ພົມມາ ອານົງຄອງສິນ — Phomma ANONGKHONGSINH
ແສງພູໄຊ ອິນທະວິຄຳ — Sengphouxay INTHAVIKHAM
ບຸຜາພອນ ແພງພັນ — Bouphaphone PHENGPHAN
ຂົວໄຊ ແສງສຸກ — Kouaxay SENGSOUK
ເພົາສາຄອນ ຄົມສອນຣາສິນ — Phaosakhone KHOMSONERASINH
ສົມໃຈ ຈັນທະວົງ — Somchay CHANTHAVONG
ບຸນທະວີ ຈຳປາທອງ — Bounthavy CHAMPATHONG

## ນັກແປ

## TRADUCTEURS

ບົວສະຫວັນ ແກ້ວບົວວັນ — Bouasavanh KEOBOUAVANH
ບຸນປອນ ພາສຸກ — Bounpone PHASOUK
ວັນນະພາ ບຸບຜາປັນຍາ — Vannapha BOUPHAPANYA
ໂອມະນີ ສີຫາລາດ — Omany SIHARATH
ບຸນເຮືອງ ວົງມະນີຄູນ — Bounheuang VONGMANYKHOUNE
ພູລາວັນ ເທບພະວົງ — Phoulavanh THEPPHAVONG

Ainsi que la participation des classes de 4°A, 5°A et 5°B du département de français.
ໂດຍການເຂົ້າຮ່ວມຂອງນັກສຶກສາພະແໜກພາສາຝຣັ່ງຫ້ອງ 4°A, 5°A ແລະ 5°B.

ປຶ້ມຫົວນີ້ແມ່ນການພົບກັນທາງດ້ານວຽກງານກໍ່ຄືການພົບປະກັນລະຫວ່າງບັນດາ
ສິນລະປິນ, ນັກສຶກສາ, ນັກກະວີລາວ ແລະ ຝຣັ່ງ.
ຕະຫຼອດໄລຍະສາມເດືອນໃນການປະກອບກິດຈະກຳທີ່ສະພາບັນວິຈິດສິນວຽງຈັນ,
ຂອງສິນລະປິນໜຸ່ມທີ່ໄດ້ຮຽນຮູ້ກ່ຽວກັບພາບພິມ ແລະ ພາບແຕ້ມ ນຳ Marie-Paule
Lesage.
ປຶ້ມຫົວນີ້ສະແດງເຖິງໝາກພົນຂອງວຽກງານ ແລະ ຂອງການຄົ້ນຄວ້າ
ແບບຫົວຄິດປະດິດສ້າງກ່ຽວກັບບັນດາບົດເລື່ອງຂອງນັກກະວີໜຸ່ມລາວ 10 ຄົນ,
ທີ່ໄດ້ແປຄວາມໝາຍອອກມາ ໂດຍການຊີ້ນຳພາຂອງ Pascal Poyet
ທີ່ສູນວັດທະນະທຳ ແລະ ການຮ່ວມມືດ້ານພາສາສາດ, ພ້ອມດ້ວຍນັກສຶກສາຈາກ
ພະແນກພາສາຝຣັ່ງຂອງມະຫາວິທະຍາໄລແຫ່ງຊາດລາວ.

Jean–André Viala

**ໂດຍສົມທົບກັບ**

ມະຫາວິທະຍາໄລແຫ່ງຊາດ, ພະແນກພາສາຝຣັ່ງ.
ສະພາບັນວິຈິດສິນແຫ່ງຊາດທີ່ວຽງຈັນ
ສູນເຄື່ອນໄຫວສິນລະປະກຳຍຸກປະຈຸບັນແຫ່ງເອີຣົບ
ເມືອງສະຕຣາດສບວກ.
ສູນກາງວັດທະນະທຳ ແລະ ການຮ່ວມມືດ້ານພາສາສາດ.

**ນັກເຄື່ອນໄຫວ**

Marie-Paule Lesage, ສິນລະປິນ.
Pascal Poyet, ນັກກະວີ

# ສາຍລົມຫນາວ

ລົມໜາວພັດຜ່ານພົ້ນ ເສາະສອດພົງໄພ
ໃບໄມ້ເປົາບາງບິນ ຫຼົ່ນລົງລານລົ້ນ
ຜົນກໍໄຊຍຊານຊົ້ນ ວາໂຍວຽນວົນເປົ່າ
ແດດທີ່ເຄີຍອຸ່ນເອົ້າ ອົມໂອ້ຍໂອ່ຍໜີ

ມັນຫາກມີດີຮ້າຍ ກະທົບທ່ອນທໍລະນີ
ລົມດົງສອບສັບສົນ ແກ່ດິນແດນດ້າມ
ຟ້າສີຄາມງາມເຂັ້ມ ເລີຍລາມລຶບປ່ຽນ
ສີຂາວສວາດສ່ອງແຈ້ງ ແປປີ້ນປ່ຽນແປງ ພຸ້ນນາ !

ລົມແຫ່ງໜາວບ່ອນນ້າວ ສອດສ່ອງກາຍໃຈ
ນຶ່ງດຽວໃນດວງຈິດ ສັ່ນເຊັນໜາວສະທ້ານ
ລະດູການປີນີ້ ລົມໜາວພັດໜາວຕ່າງ
ຮັກທີ່ເຄີຍຮ່ວມສ້າງ ລາຮ້າງລ່ວງເລີຍ

ໂດຍ : ຂິວໄຊ ແສງສຸກ ຮູບປະກອບ : ໄຊສົມພານ ເພັດບົວລະພາ





## Le vent froid

Le vent froid a soufflé sur la forêt!
Les feuilles, mortes se sont amoncelées partout
Il bruine le vent souffle encore
La chaleur du soleil a disparu

Le bien et le mal frappent la terre
Le bon vent a tourné sur le pays
Le bleu du ciel alors a changé
La clarté du blanc a dû changer oui

Le vent, de plus en plus froid pénètre dans le corps et dans le cœur
Quelque chose au fond tremble
Cette année le vent est encore plus froid a
Notre amour disparu

Poète : Kõuaxay SENGSOUK Imagier : Xaysomphane PHETBOUALAPHA



ຄວາມຮັກ

ສະຕີຈະເກີດຄວາມຮັກໄດ້ຍາກ
ແລະເມື່ອມີແລ້ວຈະໝັ້ນຄົງ
ບູລຸດຈະເກີດຄວາມຮັກໄດ້ງ່າຍແລະລຸ່ມຫຼົງ
ແຕ່ບໍ່ດົນກໍ່ຈະຈືດຈາງລືມລາ.



L'amour

Les femmes sont difficilement amoureuses
Et quand elles le sont, c'est pour longtemps
Les hommes sont facilement amoureux, follement
Mais bientôt s'éloignent et oublient.



ໂດຍ : ເພົາສາຄອນ ຄົມສອນຣາສິນ
ຮູບປະກອບ : ຄຳຂຽນ ເພັງພະຈັນ
Poème : Phaosakhone KHOMSONERASINH
Imagier : Khamkhiene PHENGPHACHANH



# ນ້ຳ

ນ້ຳໃນວັງໂວ່ງເວີ້ງ ເລິກໃຫຍ່ໄພສານ
ໄສບໍ່ມີການບົກ ເວີ່ນປີວແປງປີ້ນ ເປັນຫຼີ
ບາດວ່າຕີນສອງເບື້ອງ ຍັງມີຍາມເໜັງເຄື່ອນ
ມັນກໍເໝືອນປຽບນ້ຳ ຍາມແລ້ງແຮ່ງບົກ ນັ້ນແລ້ວ

ແນວວ່າດິນຫາດແຫ້ງ ຂາດທີ່ເພິ່ງອາໄສ
ການໄປມາຂອງສັດ ເຊັ່ນປູປາກຸ້ງ
ບາດວ່າຈຸດໝາຍມຸ້ງ ຂອງຄົນຄວບຄູ່
ໃຜດຸກໍ່ແມ່ນໄດ້ ມີໃຈສູ້ກໍ່ແມ່ນດີ

ໂດຍ : ພິມມາ ອານົງຄອງສິນ
ຮູບປະກອບ : ບົວວອນ ພິມມະບຸດ





# L'eau

Le lac   profond et étendu
Jamais à sec   toujours égal   est-ce possible ?
Comme les deux pieds   passent l'un devant l'autre
Le niveau de l'eau   baisse en été   c'est sûr !

La rive manque d'eau   plus d'abris
Plus d'agitation   crabe, poisson, escargot, crevette
Un but,   les hommes en ont un
Réussir par le travail   et mieux avec du courage.

Poète : Phomma ANONGKHONGSINH
Imagier : Bouavone PHOMMABOUTH

24 / VII

ຫ້າມຈຳໜ່າຍ

ໂດຍ : ພົມມາ ອານົງຄົງສິນ  
Poète : Phomma ANONGKHONGSINH

ຮູບປະກອບ : ວົງສະຫວັນ ດຳລົງສຸກ  
Imagier :Vongsavanh DAMLONGSOUK



# ເພື່ອຊີວິດ

ເພິ່ນວ່າດິນຄູ່ຟ້າ　　ຊາວນາຄູ່ຄັນໄຖ
ຫົວໃຈມີສິນຄງເຕັມ　　ອານິໂອບຄືງເປືອ
ເມື່ອເຮົາຍັງຕ້ອງສູ້　　ເຮົາຊີວິນລາປຽນ
ດຸໝັ້ນພຽນກ່ສ້າງ　　ພາເຮົາຮູ້ຮ່ອມຫາງ.

## Pour vivre

On dit la terre avec le ciel    le paysan avec la charrue
Le cœur, rouge    le rouge partout dans le corps
Nous, on s'arrange    on donne sa vie en échange
En travaillant, en travaillant    on trouve son chemin

## ຄວາມຮັ່ງມີ ແລະ ຈົນ

ດ້ານນຶ່ງສົມບູນດ້ວຍ ມູນມາກເງິນຄຳ
ດ້ານນຶ່ງຕ່ຳພຽງດິນ ຄອບຄວາມຈົນໄຮ້
ປຽບເໝືອນໄຟລາມໄໝ້ ມະໄລກັນບໍ່ດັບມອດ ໄດ້ແລ້ວ !
ສອງສົ້ນເຕາະຕ່ອຍດັ້ນ ຄືຟ້າບັ້ນຂວານ ແຫັ່ນ !

ໂດຍ: ແສງພູໄຊ ອິນທະວິຄາ ຮູບປະກອບ : ເດດສະຫວັນ ອິນທິສານ





Richesse et pauvreté

Certains sont riches    de l'or et de l'argent à profusion
D'autres bien bas    c'est qu'ils n'ont rien
Comme le feu se répand    le grand feu jamais éteint
Les deux s'entrechoquent    comme le coupe-coupe fend la hache

Poète : Sengphouxay INTHAVIKHAM    Imagier : Dethsavan INTHISAN

## ຄວາມເລິກລັບ

ທະເລເລິກລື່ນລົ້ນ　　ຄົນຍັງຢັ່ງກອງເກິງ
ຈັກກະວານເວຫາ　　ກໍ່ອ່ານອົມຄະເນໄດ້
ແຕ່ວ່າໃຈຄົນນີ້　　ໃຜບໍ່ຊິພອງຊັ່ງ
ລາຍເສືອລາຍນອກເນື້ອ　　ລາຍຄົນນັ້ນພັດຊ່ອນໃນ
ຫຼ້າເອີຍ





ໂດຍ : ສົມໃຈ ຈັນທະວົງ    ຮູບປະກອບ : ກົງພັດ ຫຼວງລາດ

Poète : Somchay CHANTHAVONG    Imagier : Kongphat LOUANGRATH



24/VII
ຫ້າມຈຳໜ່າຍ



Mystère

La mer est très profonde mais l'homme en touche le fond
L'espace on l'appréhende
Mais le cœur de l'homme qui peut savoir ?
Les taches du tigre sont sur sa peau celles de l'homme sont intérieures
Certes !

## ຄຶຄົນເກົ້າເຈົ້າ

ແປກໃຈຄືເພິ່ນເຈົ້າ  ເກົ້າແກ່ບູຮານຈາ ແທ້ບໍ່
ເປັນສັດສາຄືຄວາຍ  ບໍ່ກົ້ມຫົວກິນຫຍ້າ
ເປັນປາບໍ່ລອຍຫຼີ້ນ  ກະແສສິນຫ້ວຍຮ່ອງ
ພັດໄປເຍາະຢອງຢີ້  ໂປ້ໂລພົ້ນຢູ່ໂພນ ພຸ້ນເດ !

ໂດຍ ແສງພູໄຊ ອິນທະວິສາ
ຮູບປະກອບ : ໄກສອນ ລຸນຍະເສນ





## Ce que le vieillard dit

C'est étonnant quand il parle    le vieillard vraiment !
On est un animal, le buffle    sans baisser la tête pour brouter
On est poisson, sans nager    dans un cours d'eau
Mais en allant çà et là    jusqu'à se retrouver sur la butte là-bas !



Poète : Sengphouxay INTHAVIKHAM
Imagier : Kaysone LOUNNHASENE

ໂດຍ : ແພງພັນ ບຸພາພອນ
ຮູບປະກອບ : ໄຊສົມພານ ເພັດບົວລະພາ

Poète : Phengphan BOUPHAPHONE
Imagier : Xaysomphane PHETBOUALAPHA



## ຂັບຂີ່ປອດໄພ

ຂັບຂີ່ລົດ ປອດໄພພາຍໜ້າ
ໃຫ້ມີທ່າ ສະຕິໃນຕົວ
ຢ່າເມົາມົວ ດູມິ່ນປະໝາດ
ເຈົ້າຈະພາດ ຫງາຍທ່ວນກາງທາງ
ຕ້ອງລະວັງ ອຸບັດຕິເຫດ

Conduite en sécurité

Sur la route pour qu'il n'arrive rien
Il faut être prudent
Ne pas être distrait
Au risque d'échouer de se retrouver sur le pavé
Attention à l'accident.

ຄວາມງຽບຄຸມທໍ່ທຸ້ມ ກຸມກອດກວມສະກາບ
ຄວາມມືດປະສານສົມ ທ່ວມເທິງທາງອຍງ້ວງ
ລົມລ່ວງຊົມຈັບແຈ້ງ ແຍງທາງຈຶ່ງເຫັນຮ່ອມ
ຊອມສິ້ງຍິນຍ່າງຍ້າຍ ສຽງນັ້ນໝາຍບົ່ງໄວ້
ໃຫ້ເຮົາຮູ້ເມື່ອຍິນ.

ໂດຍ : ບຸນທະວີ ຈຳປາທອງ ຮູບປະກອບ : ຄຳເພັດ ໄພທູນ





Le silence recouvre tout embrasse le lieu
L'obscurité se mélange avec lui tristesse et langueur
Un souffle d'air, la lune éclaire le chemin
On guette ce qui bouge un son nous indique
ce qui se passe.



Poète : Bounthavy CHAMPATHONG Imagier : Khamphet PHAITHOUNE

ຄວາມຕາຍຫຍັບມາໃກ້ ບ່ແມ່ນເລື່ອງເກງກົວ
ແຕ່ຕອນມີຊີວິດ ບ່ອອກແຮງໂຮມສ້າງ
ສິ່ງທີ່ເປັນຕາຢ້ານ ຊີວາຍັງແຕ່ໄຮ້ຄ່າ
ແໜງວ່າຕາຍແຈບຈ້ອຍ ຄົງດິນຫັກວ່າຍັງ.

ໂດຍ : ບຸນທະວີ ຈຳປາທອງ ຮູບປະກອບ : ສັງຄົມ ສີວິໄວ





La mort approche n'ayez pas peur
Vivant on ne fait rien
Une seule chose à craindre la vie sans valeur
Mieux vaut mourir plutôt que vivre

Poète : Bounthavy CHAMPATHONG Imagier : Sangkhom SIVILAY

Estampes originales
imprimées par les
étudiants de l'Institut
National des Beaux-Arts
de Vientiane-2003

Tirage/ພິມອອກ
n°......43......

ແມ່ພິມຕົ້ນສະບັບ
ທຳການພິມໂດຍ
ນັກສຶກສາ ຈາກ
ສະຖາບັນວິຈິດສິນ ແຫ່ງຊາດ
ທີ່ນະຄອນຫຼວງວຽງຈັນ